Note: When this publication was originally published, we were known as Protection & Advocacy, Inc. (PAI).
In October 2008, we changed our name from PAI to Disability Rights California.

Laotian

# ຮວ້າຍ !
# ລູກທີ່ຂາດສະມັຖພາບຂອງຂ້ອຍ
# ຄືຖືກພັກການຮຽນຫລາຍເທື່ອແທ້ !

## *ຂ້ອຍສາມາດເຮັດຫຍັງໄດ້ແດ່ ?*
## *ສິດທິຂອງລູກຂ້ອຍມີຫຍັງແດ່ ?*



ບໍລິສັດ **Protection & Advocacy, Inc.**
3580 Wilshire Blvd., Suite #902
Los Angeles, CA 90010
ໂທຣ: 213.427.8747
ແຟກຊ: 213.427.8767
TTY: 800.727.4546

"Advancing the human and legal rights of people with disabilities."

# ຮ້າຍ! ລູກທີ່ຂາດສະມັດຖພາບຂອງຂ້ອຍ ຄືຖືກພັກການຮຽນຫລາຍເທື່ອແທ້!

## *ຂ້ອຍສາມາດເຮັດຫຍັງໄດ້ແດ່? ສິດທິຂອງລູກຂ້ອຍມີຫຍັງແດ່?*

---

*"ລູກຊາຍຂອງຂ້ອຍມີຄວາມປະພຶດທີ່ເຮັດໃຫ້ລາວປະສົບບັນຫາຫຍຸ້ງຍາກຢູ່ໂຮງຮຽນເລື້ອຍໆ. ນາຍຄູທຸກຄົນຂອງລາວໃຈຮ້າຍໃຫ້ລາວ; ເພິ່ນໂທຣຫາຂ້ອຍເລື້ອຍໆ ຫລືສົ່ງລາວໄປຫ້ອງການຂອງຄູໃຫຍ່, ແລະລາວກໍເຄີຍຖືກພັກການຮຽນຫລາຍເທື່ອແລ້ວໃນປີນີ້. ດຽວນີ້ ໂຮງຮຽນຢາກຍ້າຍລູກຂອງຂ້ອຍໄປຢູ່ບ່ອນອື່ນທີ່ເຂັ້ມງວດກວ່ານີ້ ແລະບາງເທື່ອ ບັນດານາຍຄູຕ່າງໆ ກໍເວົ້າວ່າ ຖ້າວ່າລູກຊາຍຂອງຂ້ອຍຍັງປະພຶດຕົນແບບນີ້ຢູ່, ເພິ່ນກໍຈະຕ້ອງໄລ່ລາວອອກ ຫລືຍ້າຍໃຫ້ລາວໄປຢູ່ບ່ອນອື່ນຢ່າງຖາວອນ. ຂ້ອຍຢ້ານແທນລາວ."*

ຖ້າວ່າ ກໍລະນີຂ້າງເທິງນີ້ເບິ່ງຄ້າຍຄືກັບສະຖານະການຂອງທ່ານ ຫລືຖ້າວ່າ ທ່ານມີປະສົບການທີ່ຄ້າຍຄືກັນນີ້, ທ່ານກໍຄວນຮູ້ບາງສິ່ງບາງຢ່າງໄວ້ເພື່ອຊ່ວຍເຫລືອລູກຂອງທ່ານ.

ເຖິງວ່າໂດຍທົ່ວໄປແລ້ວ ເດັກທີ່ຂາດສະມັດຖພາບ ຈະໄດ້ຮັບການປະຕິບັດດູແລ ຄືກັນກັບເດັກນັກຮຽນຄົນອື່ນໆ ໃນເລື້ອງການພັກການຮຽນ, ແຕ່ກໍມີຂໍ້ຈຳກັດບາງຢ່າງກ່ຽວກັບວ່າ ເດັກນັກຮຽນໃນໂຄງການການສຶກສາພິເສດ ອາດຖືກ ພັກການຮຽນໄດ້ແນວໃດ ແລະເມື່ອໃດ ເມື່ອຖືກພັກການຮຽນຕິດຕໍ່ກັນ ຫລືສະສົມກັນຄົບຈຳນວນວັນ ທີ່ກຳນົດໄວ້. ນອກຈາກນີ້, ກໍມີກົດໝາຍຂອງຣັຖແລະຣັຖບານກາງ ທີ່ແຊກແຊງຊ່ວຍເຫລືອດ້ານການປະພຶດ ຊຶ່ງອາດຊ່ວຍໃຫ້ລູກຂອງທ່ານ ໄດ້ຮຽນຮູ້ທີ່ຈະປະພຶດຕົນໃຫ້ເໝາະສົມເພື່ອຫລຸດຜ່ອນຄວາມເປັນໄປໄດ້ທີ່ຈະຖືກພັກການຮຽນ ຫລືຖືກໄລ່ອອກຈາກໂຮງຮຽນ.

ເອກະສານນີ້ຈະໃຫ້ຂໍ້ມູນພື້ນຖານ ກ່ຽວກັບສິດທິຂອງລູກທ່ານ ຖ້າວ່າ ລາວກຳລັງປະສົບບັນຫາດ້ານການປະພຶດ ແລະ/ຫລືຖືກພັກການຮຽນ.

*ຫົວຂໍ້ຕ່າງໆທີ່ຢູ່ໃນເອກະສານສະບັບນີ້:*

A. ການພັກການຮຽນຊົ່ວຄາວ

B. ການສະໜັບສະໜູນແລະການແຊງແຊງຊ່ວຍເຫລືອດ້ານການປະພຶດໃນທາງທີ່ດີ

C. ການຈັດໃຫ້ເຂົ້າຢູ່ໃນບ່ອນຮຽນແລະສິ່ງແວດລ້ອມທີ່ມີຂໍ້ຈຳກັດໜ້ອຍທີ່ສຸດ

*** ຖ້າວ່າ ລູກຂອງທ່ານກຳລັງຖືກພິຈາລະນາໃຫ້ອອກ, ຫລືຖ້າວ່າ ທາງການສຶກສາເຂດໄດ້ໂທຣຫາທ່ານກ່ຽວກັບ "ການພິຈາລະນາຄວາມປະພຶດຂອງນັກຮຽນ" ຫລື "ເລື້ອງສຸກເສີນ" ຂອງໂຄງການ IEP ກ່ຽວກັບການປະພຶດຂອງລູກທ່ານ, ຂໍໃຫ້ທ່ານອ້າງອີງ ຫລືເບິ່ງເອກະສານຂອງເຮົາເລື້ອງການໄລ່ນັກຮຽນທີ່ມີຄວາມຕ້ອງການພິເສດອອກ, ຊຶ່ງເອກະສານນີ້ມີຊື່ວ່າ *ຮ້າຍ! ລູກທີ່ຂາດສະມັດຖພາບຂອງຂ້ອຍກຳລັງຈະຖືກໄລ່ອອກ!* *(YIKES! My Child With A Disability Is Being Considered for Expulsion!)* ***

## *A. ການພັກການຮຽນຊົ່ວຄາວ*

ໂດຍທົ່ວໄປແລ້ວ ໃນກໍລະນີການຖືກພັກການຮຽນ ບັນດານັກຮຽນທີ່ຂາດສະມັດຖະພາບ ຈະໄດ້ຮັບການປະຕິບັດ ດູແລຄືກັນກັບເດັກນັກຮຽນລຸ້ນດຽວກັນທີ່ບໍ່ໄດ້ຂາດສະມັດຖະພາບ[1], ແມ່ນແຕ່ ຄວາມປະພຶດທີ່ກ່ຽວຂ້ອງໂດຍກົງກັບການຂາດສະມັດຖະພາບຂອງເຂົາເຈົ້າ. ຄວາມແຕກຕ່າງລະຫວ່າງການ ປະຕິບັດຕໍ່ເດັກນັກຮຽນທີ່ຂາດ ຫລືບໍ່ຂາດສະມັດຖະພາບ ກໍຄື ລະຍະເວລາຂອງການພັກການຮຽນ ແລະ ຈຳນວນວັນທີ່ຖືກພັກການຮຽນ ຊຶ່ງອາດຖືກນັບສະສົມກັນໃນລະຫວ່າງປີການສຶກສາ. ຍົກເວັ້ນ ພາຍໃຕ້ ສະພາບການທີ່ມີຂໍ້ຈຳກັດ, ໃນຣັຖຄາລີຟໍເນັຽ ນັກຮຽນທີ່ບໍ່ຂາດສະມັດຖະພາບສາມາດ ຖືກພັກຮຽນໄດ້ເຖິງ 20 ວັນລວມກັນຕໍ່ປີການສຶກສາ.[2] ຢ່າງໃດກໍຕາມ, ໂດຍທົ່ວໄປແລ້ວ ນັກຮຽນໃນໂຄງການການສຶກສາ ພິເສດບໍ່ສາມາດຖືກພັກຮຽນ ຫລືຖືກຍ້າຍອອກກາຍ 10 ວັນຮຽນຕິດຕໍ່ກັນ[3] ໂດຍປາດສະຈາກການຍິນຍອມ ຂອງພໍ່ແມ່ ຫລືຄຳສັ່ງຂອງສານ ຫລືຄຳສັ່ງຂອງເຈົ້າໜ້າທີ່ພິຈາລະນາຄະດີໄດ້. ບໍ່ວ່າໃນກໍລະນີໃດກໍຕາມ ນັກຮຽນທີ່ໄດ້ຮັບການສຶກສາພິເສດ ບໍ່ຄວນຖືກກີດກັນຈາກການຮັບການບໍລິການ ດ້ານການສຶກສາທີ່ເໝາະສົມ ກາຍກວ່າ 10 ວັນຕາມວັນຮຽນຕິດຕໍ່ກັນ ໂດຍປາດສະຈາກການທົບທວນ ຄຳຕັດສິນເລື້ອງຄວາມປະພຶດ ແລະການປົກປ້ອງທາງກົດໝາຍເພີ້ມເຕີມສຳລັບນັກຮຽນທີ່ຂາດສະມັດຖະພາບ.[4]

ໃນການພັກການຮຽນ, ເຈົ້າໜ້າທີ່ຂອງໂຮງຮຽນ ຫລືການສຶກສາເຂດມີອຳນາດທີ່ຈະຍ້າຍນັກຮຽນ ທີ່ຮັບ ການສຶກສາພິເສດອອກຈາກບ່ອນຮຽນປັດຈຸບັນໄປຢູ່ໃນບ່ອນຮຽນອື່ນຊົ່ວຄາວໄດ້, ຊຶ່ງໃນກໍລະນີນີ້ມັກ ເອີ້ນວ່າ "ການຍ້າຍບ່ອນຮຽນຊົ່ວຄາວ". ຢ່າງໃດກໍຕາມ, ການຍົກຍ້າຍອອກບໍ່ສາມາດເຮັດກາຍ 10 ວັນຮຽນຕິດຕໍ່ກັນໄດ້.[5] ນັກຮຽນທີ່ຮັບການສຶກສາພິເສດຍັງສາມາດຖືກພັກຮຽນໄດ້ຫລາຍຄັ້ງ ສຳລັບການ ກະທຳຜິດແຕ່ລະຄັ້ງຊຶ່ງນັບລວມກັນ ໄດ້ຫລາຍກວ່າ 10 ວັນຕາມວັນຮຽນໃນປີການສຶກສາ, ຕາບໃດທີ່ຍັງບໍ່ ມີການພັກການຮຽນຄັ້ງໃດຄັ້ງໜຶ່ງກາຍ 10 ວັນຕາມວັນຮຽນຕິດຕໍ່ກັນ ແລະມັນບໍ່ໄດ້ສະແດງໃຫ້ເຫັນວ່າ ເປັນການປ່ຽນບ່ອນຮຽນ.[6]

ຢ່າງໃດກໍຕາມ, ນັກຮຽນທີ່ຮັບການສຶກສາພິເສດ ຕ້ອງໄດ້ຮັບການບໍລິການການສຶກສາສາທາລະນະ (FAPE) ຟຣີ ຫລັງຈາກຖືກພັກຮຽນກາຍ 10 ວັນຕາມວັນຮຽນລວມກັນໃນປີການສຶກສາ ເຖິງແມ່ນວ່າ ການພັກການຮຽນຈະເກີດຂຶ້ນໃນຮູບແບບ ການຍ້າຍບ່ອນຮຽນຊົ່ວຄາວ.[7] ເຂດການສຶກສາ ຕ້ອງຈັດຫາການບໍລິການຕ່າງໆ, ທີ່ຈຳເປັນ, ເພື່ອຊ່ວຍໃຫ້ນັກຮຽນກ້າວໜ້າຢ່າງເໝາະສົມໃນການ ຮ່ຳຮຽນໃນຫລັກສູດການສຶກສາທົ່ວໄປ ແລະເພື່ອ ໃຫ້ກ້າວໜ້າ ຈົນກະທັ່ງສຳເລັດການສຶກສາຕາມເປົ້າໝາຍ IEP ຂອງນັກຮຽນ.[8] ອັນນີ້ໝາຍຄວາມວ່າ ໃນວັນທີ່ 11 ຂອງການພັກການຮຽນໃນປີການສຶກສານັ້ນ,

ເຂດການສຶກສາຕ້ອງຈັດຫາ FAPE ໃຫ້ນັກຮຽນ ເຖິງແມ່ນວ່າ ນັກຮຽນອາດບໍ່ໄດ້ຢູ່ໃນບ່ອນຮຽນປັດຈຸບັນຂອງເຂົາ ເພື່ອໃຫ້ໄດ້ຮັບການບໍລິການດ້ານການສຶກສາຂອງເຂົາ.

ຍົກຕົວຢ່າງ, ຖ້າວ່າ ນັກຮຽນທີ່ຮັບການສຶກສາພິເສດຖືກພັກຮຽນ ຍ້ອນຕີກັນໃນເຂດບໍລິເວນຂອງໂຮງຮຽນ, ເຂົາອາດຖືກພັກຮຽນຊົ່ວຄາວເປັນເວລາເຖິງ 10 ວັນຕາມວັນຮຽນຕິດຕໍ່ກັນ ແລະຖືກໃຫ້ຢູ່ນອກໂຮງຮຽນ ຫລືແມ້ແຕ່ ຖືກສົ່ງໄປບ່ອນຮຽນອື່ນໃນລະຍະເວລານັ້ນ. ຈາກນັ້ນຖ້າວ່າ, ຫລັງຈາກ 4 ອາທິດແລ້ວ, ນັກຮຽນຜູ້ເກົ່າສ້າງບັນຫາ ອີກ ແລະຮ້ອງດ່າປ່າງຫຍາບຄາຍໃສ່ນາຍຄູຕ່າງໆ ແລະໝູ່ເພື່ອນ, ເຂົາອາດຖືກພັກຮຽນອີກດົນເຖິງ 10 ວັນ ຕິດຕໍ່ກັນຕາມວັນຮຽນ. ຢ່າງໃດກໍຕາມ, ເນື່ອງຈາກວ່າ ການພັກການຮຽນຄັ້ງທີສອງນີ້ ຈະເຮັດໃຫ້ມີຍອດວັນລວມ ກາຍ 10 ວັນຕາມວັນຮຽນໃນປີການສຶກສານັ້ນ, ເຂດການສຶກສາຕ້ອງຈັດຫາ FAPE ໃຫ້ນັກຮຽນໃນບ່ອນຮຽນ ທີ່ຍ້າຍໄປໃໝ່ຊົ່ວຄາວ. ຖ້າວ່າ ນັກຮຽນຖືກພັກຮຽນ 11 ວັນ ຫລືຫລາຍວັນຕິດຕໍ່ກັນ ເນື່ອງດ້ວຍເຫດໃດໆ ກໍຕາມ, ການພັກຮຽນ ຈະຖືກພິຈາລະນາໂດຍອັດຕະໂນມັດໂດຍໃຫ້ມີການປ່ຽນບ່ອນຮຽນ, ແລະຈະມີການປົກປ້ອງພິເສດທາງກົດໝາຍ ສໍາລັບນັກຮຽນທີ່ຂາດສະມັດຖະພາບ ຊຶ່ງຖືກພິຈາລະນາໃຫ້ຖືກໄລ່ອອກ.[9] ນັກຮຽນທຸກຄົນທີ່ຂາດ ຫລືບໍ່ຂາດສະມັດຖະພາບ, ແມ່ນຖືກຈໍາກັດໃຫ້ພັກການຮຽນໄດ້ລວມ 20 ວັນໃນປີການສຶກສາໜຶ່ງ (ຍົກເວັ້ນວ່າ ມັນອາດຖືກຍົກເວັ້ນໃຫ້ເຖິງ 30 ວັນລວມກັນໃນປີການສຶກສາໜຶ່ງສໍາລັບນັກຮຽນທີ່ກໍາລັງປັບຕົວ ເມື່ອຖືກຍ້າຍໄປໂຮງຮຽນໃໝ່).[10]

ໃຫ້ຈື່ໄວ້ວ່າ ເຖິງວ່າການສຶກສາເຂດອາດໄດ້ເລີ້ມຈັດຫາການບໍລິການບາງຢ່າງໃຫ້ໃນບ່ອນຮຽນໃໝ່ຊົ່ວຄາວ ເນື່ອງຈາກມັນເປັນຂໍ້ບັງຄັບຂອງທາງເຂດທີ່ຈະຕ້ອງຈັດຫາ FAPE ໃຫ້, ແຕ່ກໍບໍ່ໄດ້ໝາຍຄວາມວ່າການສຶກສາເຂດ ຈະສາມາດລະເລີຍບໍ່ຮັກສາການຈໍາກັດການພັກຮຽນ 10 ວັນຫລືຈໍາກັດວັນລວມ 20 ວັນໃນປີການສຶກສາໜຶ່ງໄດ້.

ໃນບາງກໍລະນີ, ຈໍານວນຄັ້ງໃນການພັກການຮຽນຊຶ່ງລວມກັນແລ້ວຫລາຍກວ່າ 10 ຄັ້ງໃນວັນຮຽນ ຕໍ່ປີການສຶກສາ ສາມາດກໍ່ໃຫ້ເກີດການປ່ຽນບ່ອນຮຽນໄດ້ໂດຍບໍ່ຕ້ອງມີການປະຊຸມ IEP ແລະການຍິນຍອມຂອງພໍ່ແມ່ ຖ້າວ່າ ການພັກການຮຽນສະແດງໃຫ້ເຫັນເຖິງແບບແຜນຂອງຄວາມປະພຶດ. ປັດໃຈຕ່າງໆ ເຊັ່ນວ່າລະຍະເວລາຂອງການຍົກຍ້າຍອອກແຕ່ລະຄັ້ງ, ຈໍານວນລວມຂອງເວລາທີ່ນັກຮຽນຖືກຍ້າຍອອກ, ລະຍະຫ່າງຂອງການຍົກຍ້າຍອອກ ໃນແຕ່ລະຄັ້ງ, ແລະຄວາມຄ້າຍຄືກັນຂອງການປະພຶດຂອງນັກຮຽນໃນແຕ່ລະຄັ້ງທີ່ຖືກພັກຮຽນ ອາດຖືກນໍາມາ ພິຈາລະນາ ເພື່ອຕັດສິນວ່າຮູບແບບຂອງການພັກຮຽນນັ້ນເບິ່ງຄືວ່າເປັນການປ່ຽນບ່ອນຮຽນ ຫລືການໄລ່ອອກທີ່ບໍ່ຖືກ ກົດໝາຍຫລືບໍ່. ຖ້າວ່າ

ການໃຫ້ພັກຮຽນເບິ່ງຄືວ່າເປັນແນວນັ້ນ, ຈຳນວນຄັ້ງຂອງການໃຫ້ພັກຮຽນ ກໍອາດພາໃຫ້ເກີດການປ່ຽນບ່ອນຮຽນໃໝ່ຊົ່ວຄາວໄດ້.[11] ຖ້າວ່າ ເຫັນວ່າການພັກຮຽນເປັນການປ່ຽນບ່ອນຮຽນໃໝ່, ທາງຄະນະ IEP ຕ້ອງຈັດໃຫ້ມີການປະຊຸມເພື່ອພິຈາລະນາຕັດສິນ, ແລະສິດທິ ແລະໜ້າທີ່ທຸກຢ່າງທີ່ກ່ຽວກັບການປ່ຽນບ່ອນຮຽນ ຈະຕ້ອງຖືກນຳມາພິຈາລະນາດ້ວຍ.[12]

ຍົກຕົວຢ່າງ, ຖ້າວ່າລູກຂອງທ່ານຖືກພັກຮຽນລວມກັນແລ້ວ 12 ວັນແລະປີການສຶກສາກໍ ເຫລືອພຽງເຄິ່ງປີເທົ່ານັ້ນ, ທ່ານອາດສາມາດພິສູດໃຫ້ເຫັນໄດ້ວ່າ ລະຍະຫ່າງຂອງການພັກການຮຽນ ທຸກຄັ້ງໃນປັດຈຸບັນເບິ່ງຄືວ່າ ຈະເກີດຂຶ້ນເປັນລຳດັບ. ນອກຈາກນີ້, ຖ້າວ່າ ການໃຫ້ພັກຮຽນ ທັງໝົດເກີດຂຶ້ນ ເນື່ອງຈາກເຫດການການປະພຶດ ທີ່ຄ້າຍຄືກັນຫລາຍ ຫລືຊະນິດຂອງການປະພຶດຄ້າຍ ຄືກັນຫລາຍ, ທ່ານກໍອາດໂຕ້ຖຽງໄດ້ວ່າ ຮູບແບບນີ້ໄດ້ເກີດຂຶ້ນແລ້ວ. ສຳລັບເຫດການເຫລົ່ານີ້, ການພັກການຮຽນຂອງລູກທ່ານກໍສາມາດຖືກພິຈາລະນາ ໄດ້ວ່າເປັນການປ່ຽນແປງບ່ອນຮຽນໃໝ່ ໂດຍປາດສະຈາກການປະຊຸມຂອງ IEP ຫລືການຍິນຍອມຂອງພໍ່ແມ່. ໃນຕົວຢ່າງນີ້, ຖ້າວ່າ ຍອດລວມການພັກຮຽນຊຶ່ງມີ 12 ວັນຂອງການຍ້າຍອອກນັ້ນຖືກຖືວ່າເປັນການປ່ຽນບ່ອນຮຽນ, ສະນັ້ນ ກໍຈະຕ້ອງມີການນຳໃຊ້ ການປົກປ້ອງທາງກົດໝາຍສຳລັບນັກຮຽນທີ່ຂາດສະມັດຖະພາບ ຊຶ່ງຖືກຕັດສິນໃຫ້ໄລ່ອອກ.

ບົດທີ 8 ຂອງຄູ່ມື PAI ວ່າດ້ວຍ*ສິດທິດ້ານການສຶກສາພິເສດແລະຄວາມຮັບຜິດຊອບຕ່າງໆ* (*Special Education Rights and Responsibilities: SERR*) ຈະເວົ້າເຖິງເລື້ອງການພັກການຮຽນ ແລະການໄລ່ອອກຢ່າງລະອຽດ. ກະຣຸນາອ້າງອີງເຖິງເອກະສານ ເລື້ອງການໄລ່ອອກຂອງ PAI, ຊຶ່ງມີຊື່ວ່າ *ຮ້າຍ! ລູກທີ່ຂາດສະມັດຖະພາບຂອງຂ້ອຍກຳລັງຊິຖືກໄລ່ອອກ! (YIKES! My Child With A Disability Is Being Considered for Expulsion!)*.

## *B. ການແຊກແຊງຊ່ວຍເຫລືອດ້ານການປະພຶດຕົນໃນທາງທີ່ດີ*

ຖ້າວ່າ ລູກຂອງທ່ານມີຄວາມປະພຶດທີ່ຂັດຂວາງ ຫລືລົບກວນການຮຽນຮູ້ຂອງລາວ ຫລືຂອງຜູ້ອື່ນ, ລາວມີສິດ ທີ່ຈະໄດ້ຮັບການບໍລິການທີ່ກ່ຽວຂ້ອງ ແລະການຊ່ວຍເຫລືອເພີ້ມເຕີມອື່ນໆ ແລະການບໍລິການຕ່າງໆຊຶ່ງອາດຈຳເປັນ ເພື່ອໃຫ້ລູກຂອງທ່ານ ສາມາດຮັບປະໂຫຍດຈາກໂຄງການການສຶກສາພິເສດຂອງລາວໄດ້.[13] ກົດໝາຍວ່າດ້ວຍ ການສຶກສາພິເສດກຳນົດວ່າ ຄະນະ IEP ຕ້ອງພິຈາລະນານຳໃຊ້ວິທີການຕ່າງໆ,

ລວມເຖິງການປະເມີນຜົນ[14], ການເຂົ້າຊ່ວຍເຫລືອໃຫ້ມີຄວາມປະພຶດທີ່ດີແລະການສະໜັບສະໜູນ[15], ເພື່ອແກ້ໄຂບັນຫາດ້ານຄວາມປະພຶດ.

ນອກຈາກນີ້, ຣັຖຄາລີຟໍເນັຽມີກົດລະບຽບພິເສດ ໃນການຊ່ວຍເຫລືອດ້ານຄວາມປະພຶດ, ບາງຄັ້ງກໍເອີ້ນວ່າ "Hughes Bill Behavioral Interventions". ກົດລະບຽບພິເສດເຫລົ່ານີ້ ກໍານົດໃຫ້ມີການປະເມີນຜົນ ຢ່າງລະອຽດ ແລະກວ້າງຂວາງ ຊຶ່ງເອີ້ນວ່າ "ການປະເມີນຜົນເພື່ອຫາສາເຫດຂອງການປະພຶດ (Functional Analysis Assessment :FAA)" ຫລື "Hughes Bill Assessment" ແລະການພັດທະນາ ແລະການຈັດຕັ້ງປະຕິບັດຕາມແຜນການຊ່ວຍເຫລືອດ້ານຄວາມປະພຶດທີ່ດີ. ກົດລະບຽບຕ່າງໆ ຍັງຫ້າມບໍ່ໃຫ້ມີການ ນໍາໃຊ້ການແຊກແຊງດ້ານຄວາມປະພຶດທີ່ມີການລັງກຽດ.[16]

ຈາກນັ້ນ ຫລັກຖານການຄົ້ນພົບຂອງ FAA, ຂໍ້ມູນແລະຄໍາແນະນໍາຕ່າງໆ ຈະຖືກນໍາໃຊ້ເຂົ້າໃນການ ພັດທະນາແຜນການຊ່ວຍເຫລືອດ້ານຄວາມປະພຶດທີ່ເປັນບວກສໍາລັບນັກຮຽນ. ແຜນການນີ້ຈະກາຍເປັນສ່ວນໜຶ່ງຂອງແຜນການ IEP ຂອງນັກຮຽນ ແລະຈະມີເປົ້າໝາຍແລະຈຸດປະສົງທີ່ກ່ຽວຂ້ອງກັນ ເພື່ອຫລຸດຜ່ອນຄວາມປະພຶດ ທີ່ບໍ່ຕ້ອງການ ຫລືທີ່ບໍ່ດີ ແລະສ້າງແບບແຜນການປະພຶດທີ່ຍອມຮັບໄດ້ແລະເໝາະສົມ. ນອກເໜືອຈາກນີ້, ແຜນການຊ່ວຍເຫລືອດ້ານຄວາມປະພຶດ ສາມາດນໍາໄປປະຕິບັດໄດ້ສະເພາະ ຫລືພາຍໃຕ້ການຄວບຄຸມຂອງບຸກຄົນ ທີ່ໄດ້ຮັບການອົບຮົມດ້ານການວິເຄາະຄວາມປະພຶດເທົ່ານັ້ນ.[17]

ຖ້າວ່າ ນັກຮຽນສະແດງໃຫ້ເຫັນເຖິງການປະພຶດທີ່ບໍ່ສາມາດຄາດເດົາໄດ້ ຊຶ່ງເປັນອັນຕະລາຍຢ່າງເຫັນໄດ້ຊັດ ຕໍ່ຕົນເອງ ຫລືຜູ້ອື່ນ, ເຈົ້າໜ້າທີ່ໂຮງຮຽນກໍອາດນໍາໃຊ້ການແຊກແຊງຊ່ວຍເຫລືອແບບສຸກເສີນ. ຢ່າງໃດກໍຕາມ, ການຊ່ວຍເຫລືອແບບສຸກເສີນ ຈະບໍ່ສາມາດນໍາໃຊ້ໄດ້ດົນກວ່າຄວາມຈໍາເປັນໃນການຮັກສາ ຫລືຄວບຄຸມຄວາມປະພຶດ ອັນໃດໜຶ່ງ.[18] ນອກຈາກນີ້ *ບໍ່ຄວນ*ນໍາໃຊ້ການຊ່ວຍເຫລືອສຸກເສີນ ແທນແຜນການຊ່ວຍເຫລືອດ້ານຄວາມປະພຶດ ທີ່ເປັນລະບົບ ຊຶ່ງຖືກອອກແບບມາເພື່ອປ່ຽນແປງ, ແທນທີ່ ຫລືເຮັດໃຫ້ພຶດຕິກໍາເປົ້າໝາຍດີຂຶ້ນ.[19]

ບົດທີ 5 ໃນຄູ່ມື *SERR* ຂອງ PAI ຈະເວົ້າເຖິງເລື້ອງ ການບໍລິການຕ່າງໆ ທີ່ກ່ຽວຂ້ອງ, ການຊ່ວຍເຫລືອດ້ານພຶດຕິກໍາ, ການຊ່ວຍເຫລືອສຸກເສີນ ແລະຂໍ້ຫ້າມໃນການແຊກແຊງດ້ານຄວາມປະພຶດຢ່າງລະອຽດ. ກະຣຸນາອ້າງອີງເຖິງ ແຜນຜັງການແຊກແຊງຊ່ວຍເຫລືອດ້ານຄວາມປະພຶດຊຶ່ງຢູ່ທ້າຍສຸດຂອງບົດທີ 5.

## C. *ການຈັດໃຫ້ເຂົ້າຢູ່ໃນບ່ອນຮຽນແລະສິ່ງແວດລ້ອມທີ່ມີຂໍ້ຈຳກັນໜ້ອຍທີ່ສຸດ*

ສິ່ງແວດລ້ອມທີ່ມີຂໍ້ຈຳກັດໜ້ອຍທີ່ສຸດ (“LRE”) ແມ່ນຂໍ້ກຳນົດໃນກົດໝາຍວ່າດ້ວຍ ການສຶກສາພິເສດຊຶ່ງເດັກນັກຮຽນທີ່ຂາດສະມັຖພາບ ຈະໄດ້ຮັບການສຶກສາຫລາຍທີ່ສຸດຕາມຄວາມເໝາະສົມ ແລະຮ່ວມກັບກຸ່ມເພື່ອນ ທີ່ບໍ່ໄດ້ຂາດສະມັຖພາບ. ກົດໝາຍວ່າດ້ວຍການສຶກສາພິເສດຍັງກຳນົດໄວ້ວ່າ ການສຶກສາເຂດຕ້ອງເປັນຜູ້ພິຈາລະນາວ່າ ນັກຮຽນທີ່ຮັບການສຶກສາພິເສດແຕ່ລະຄົນ ສາມາດຮໍ່າຮຽນໃນຫ້ອງຮຽນປົກກະຕິໄດ້ຢ່າງໜ້າພໍໃຈ ພ້ອມກັບໄດ້ຮັບການ ຊ່ວຍເຫລືອເພີ້ມເຕີມ ແລະການບໍລິການຕ່າງໆ ຫລືບໍ່ ກ່ອນທີ່ຈະຕັດສິນຍ້າຍເດັກເຂົ້າໄປຢູ່ໃນບ່ອນຮຽນໃໝ່ທີ່ມີ ຂໍ້ຈຳກັດ ຫລືເຂັ້ມງວດກວ່າເກົ່າ.[20] ອັນນີ້ໝາຍຄວາມວ່າ ນັກຮຽນທີ່ໄດ້ຮັບການສຶກສາພິເສດ ບໍ່ຄວນຖືກຍ້າຍອອກຈາກຫ້ອງຮຽນ ປົກກະຕິ ເວັ້ນແຕ່ວ່າ, ເຖິງແມ່ນວ່າ ຈະມີການບໍລິການຊ່ວຍເຫລືອອື່ນໆ ໃຫ້ແກ່ນັກຮຽນ ກໍຕາມ, ນັກຮຽນຈະບໍ່ສາມາດສ້າງຄວາມກ້າວໜ້າ ຫລືໄດ້ຮັບປະໂຫຍດຈາກການຮໍ່າຮຽນໃນຫ້ອງຮຽນປົກກະຕິ.

ພາຍໃຕ້ຂໍ້ກຳນົດ LRE, ທາງຄະນະ IEP ຕ້ອງບັນທຶກເຫດຜົນທີ່ສະເໜີແນະ ໃຫ້ມີການຈັດບ່ອນຮຽນ ໃຫ້ໃໝ່ ຊຶ່ງແຕກຕ່າງຈາກໂຮງຮຽນ ແລະຫ້ອງຮຽນທີ່ນັກຮຽນຈະເຂົ້າຮຽນ ຖ້າວ່າ ນັກຮຽນບໍ່ໄດ້ຂາດສະມັຖພາບ. ເອກະສານບັນທຶກນັ້ນ ຄວນລະບຸວ່າ ເປັນຫຍັງການຂາດສະມັຖພາບຂອງນັກຮຽນ ຈຶ່ງເປັນອຸປະສັກຕໍ່ຄວາມຕ້ອງການ ໃນການຮຽນຮູ້ໃນບ່ອນຮຽນທີ່ມີຂໍ້ຈຳກັດໜ້ອຍ ເຖິງແມ່ນວ່າ ຈະມີການໃຫ້ຄວາມຊ່ວຍເຫລືອເພີ້ມເຕີມ ແລະການ ບໍລິການຕ່າງໆ ກໍຕາມ. ອັນນີ້ໝາຍຄວາມວ່າ ***ກ່ອນໜ້າທີ່ຈະ***ມີການສະເໜີແນະໃຫ້ຈັດເອົານັກຮຽນທີ່ມີບັນຫາ ຮ້າຍແຮງດ້ານຄວາມປະພຶດ ຫລືຄວາມພິການອື່ນເຂົ້າຢູ່ໃນບ່ອນຮຽນທີ່ແຍກຕ່າງຫາກ, ເຊັ່ນຫ້ອງຮຽນພິເສດຍາມກາງເວັນ, ໂຮງຮຽນເອກະຊົນ ຫລືໂຮງຮຽນກິນນອນ, ທາງຄະນະ IEP ຄວນພິຈາລະນາ, ຈັດຫາ, ພັດທະນາ ແລະ/ຫລື ໃຫ້ບໍລິການຊ່ວຍເຫລືອ ເຊັ່ນການໃຫ້ຄຳປຶກສາ, ການບໍລິການ AB3632[21], ການຊ່ວຍເຫລືອດ້ານການ ປະພຶດຕົນແບບຕົວຕໍ່ຕົວ, ແຜນການຊ່ວຍເຫລືອດ້ານຄວາມປະພຶດ, ການປະເມີນຜົນ ເພື່ອວິເຄາະຄວາມສາມາດ ແລະການບໍລິການອື່ນໆ ທີ່ກ່ຽວຂ້ອງ.

ນອກຈາກນີ້, ຂໍ້ທີ 2 ຂອງກົດລະບຽບແຫ່ງຣັຖຄາລີຟໍເນັຽລະຫັດ, § 60100 ບອກວ່າ:

> ກ່ອນທີ່ຈະມີການຕັດສິນວ່າ ການກຳນົດບ່ອນຮຽນແບບກິນນອນນັ້ນ ຈຳເປັນສຳລັບນັກຮຽນ ເພື່ອໃຫ້ສາມາດ ຮັບການສຶກສາພິເສດ ແລະການບໍລິການດ້ານສຸຂະພາບຈິດໄດ້, ຄະນະ IEP ຄວນຈະພິຈາລະນາກຳນົດ ບ່ອນຮຽນທີ່ມີຂໍ້ຈຳກັດໜ້ອຍລົງ, ເຊັ່ນການຈັດຫາຜູ້ຊ່ຽວຊານ

ດ້ານການປະພຶດ ແລະຜູ້ຊ່ວຍເຕັມເວລາ ດ້ານການປະພຶດໃນຫ້ອງຮຽນ, ຢູ່ເຮືອນ ແລະຢູ່ໃນຊຸມຊົນບ່ອນອື່ນໆ, ແລະ/ຫລື ການຝຶກອົບຮົມ ພໍ່ແມ່ຢູ່ເຮືອນ ແລະໃນສະຖານທີ່ຂອງຊຸມຊົນ. ຄະນະ IEP ຄວນຈະບັນທຶກກ່ຽວກັບທາງເລືອກຕ່າງໆ ໃນການຈັດບ່ອນຢູ່ໃຫ້ເດັກ ແລະເຫດຜົນວ່າ ເປັນຫຍັງທາງເລືອກເຫລົ່ານັ້ນຈຶ່ງຖືກປະຕິເສດ. ທາງເລືອກ ດັ່ງກ່າວອາດປະກອບດ້ວຍ ການປະສົມປະສານກັນ ລະຫວ່າງການຮ່ວມມື ໃນດ້ານການບໍລິການ ດ້ານການສຶກສາ ແລະການບໍລິການສຸຂະພາບຈິດ.

ມາດຕານີ້ໃນກົດຂໍ້ບັງຄັບຂອງຣັຖຄາລິຟໍເນັຽ ຍັງເນັ້ນໃສ່ ແລະສະໜັບສະໜູນ LRE. ມາດຕາ 60100 ລະບຸວ່າ ກ່ອນທີ່ຈະມີການສະເໜີແນະ ຫລືການສົ່ງເດັກໄປຢູ່ບ່ອນໃໝ່ ໃນໂຄງການການສຶກສາແບບຢູ່ປະຈຳ, ທາງເຂດສຶກສາອາດຕ້ອງຈັດຫາຜູ້ຊ່ວຍດ້ານຄວາມປະພຶດ ແບບຕົວຕໍ່ຕົວ ໂດຍຢູ່ນອກຊົ່ວໂມງຮຽນ. ເນື່ອງຈາກທຳມະຊາດຂອງການຂາດສະມັຖພາບ ຂອງນັກຮຽນ, ນັກຮຽນອາດຕ້ອງການການຊ່ວຍເຫລືອເພີ້ມເຕີມ ເພື່ອໃຫ້ສາມາດຢູ່ໄດ້ໃນ ບ່ອນຮຽນທີ່ບໍ່ແມ່ນແບບຢູ່ປະຈຳ, ເຊັ່ນ ການມີຜູ້ຊ່ວຍດ້ານການສຶກສາແບບຕົວຕໍ່ຕົວໃນຍາມເຊົ້າ (ເພື່ອຊ່ວຍໃຫ້ເດັກ ໄປໂຮງຮຽນທັນ), ແລະຍາມບ່າຍ (ເພື່ອຊ່ວຍໃຫ້ເດັກກັບເຮືອນ).

***ໝາຍເຫດ:*** *ຖ້າວ່າທ່ານຕ້ອງການຢາກໄດ້ບົດອື່ນໆຈາກຄູ່ມື SERR ຫລືເອກະສານອື່ນໆ, ທ່ານສາມາດ ດາວໂຫລດໄດ້ຈາກເວັບໄຊຂອງ PAI ທີ່ www.pai-ca.org ຫລືທ່ານສາມາດຂໍຮັບໄດ້ໂດຍ ໂທຣໄປທີ່ຫ້ອງການຂອງເຮົາທີ່ເບີໂທຣຟຣີ (800) 776-5746.*

## ຕົວຫຍໍ້ຕ່າງໆ ທີ່ໃຊ້ອ້າງອີງທາງກົດໝາຍ

| | |
|---|---|
| §, §§ | ມາດຕາ, ມາດຕາຕ່າງໆ |
| 20 U.S.C. | ໝວດທີ 20 ຂອງປະມວນກົດໝາຍສະຫະຣັຖອາເມລິກາ |
| 34 C.F.R. | ໝວດທີ 34 ຂອງປະມວນກົດໝາຍກ່ຽວກັບກົດຂໍ້ບັງຄັບຂອງຣັຖບານກາງ |
| Cal. Ed. Code | ປະມວນກົດໝາຍວ່າດ້າຍການສຶກສາແຫ່ງຣັຖຄາລິຟໍເນັຽ |
| 5 C.C.R. | ໝວດທີ 5 ຂອງປະມວນກົດໝາຍກ່ຽວກັບກົດຂໍ້ບັງຄັບຂອງຣັຖຄາລິຟໍເນັຽ |

## ເອກະສານອ້າງອີງ

---

[1] 20 U.S.C. § 1415(k); Cal. Ed. Code § 48900.5, 48911.5; ເບິ່ງກົດລະບຽບທົ່ວໄປດ້ານການພັກການຮຽນ, Cal. Ed. Code §§ 48900 – 48915.5

[2] Cal. Ed. Code § 48903

[3] 34 C.F.R. § 300.530(b)

[4] 34 C.F.R. § 300.530(e); ເບິ່ງເອກະສານເພີ້ມເຕີມຂອງ PAI: *ຮ້າຍ! ລູກທີ່ຂາດສະມັຖພາບຂອງຂ້ອຍກຳລັງຊິຖືກໄລ່ອອກ!*

[5] 34 C.F.R. § 300.530(b)

[6] 34 C.F.R. § 300.530(b)

[7] 34 C.F.R. §§ 300.530(b)(2) ແລະ (d)(4); ແລະ 300.536

[8] 20 U.S.C § 1415 (k)(1)(D); 34 C.F.R. §§ 300.530(b)(2) ແລະ (d)

[9] 34 C.F.R. § 300.530(e); ເບິ່ງເອກະສານເພີ້ມເຕີມຂອງ PAI: *ຮ້າຍ! ລູກທີ່ຂາດສະມັຖພາບຂອງຂ້ອຍກຳລັງຊິຖືກໄລ່ອອກ!*

[10] Cal. Educ. Code § 48903

[11] 34 C.F.R. § 300.536(a)(2)

[12] 34 C.F.R. § 300.530(e); ເບິ່ງເອກະສານເພີ້ມເຕີມຂອງ PAI: *ຮ້າຍ! ລູກທີ່ຂາດສະມັຖພາບຂອງຂ້ອຍກຳລັງຊິຖືກໄລ່ອອກ!*

[13] 20 U.S.C § 1401(26) ແລະ (33); 34 C.F.R. § 300.34; Cal. Ed. Code §§ 56033.5, 56520 – 56525, 56363; ແລະ 5 Cal. Code Regs. §§ 3001 (d), (e) ແລະ (f), 3052

[14] 34 C.F.R. § 300.304(b)(4); Cal. Ed. Code § 56320(f); *ເບິ່ງເພີ້ມເຕີມ:* ລະບຽບການ ປະເມີນຜົນ, ການປະເມີນຜົນແລະການປະເມີນຜົນຄືນໃໝ່ 34 C.F.R. §§ 300.303 – 300.305

[15] Cal. Ed. Code §§ 56520, 56521 ແລະ 56523

[16] Cal. Ed. Code §§ 56520 – 56525; 5 Cal. Code Regs. §§ 3001 (d), (e) ແລະ (f), ແລະ 3052

[17] Cal. Ed. Code §§ 56520 – 56525; 5 Cal. Code Regs. §§ 3001 (d), (e) ແລະ (f), ແລະ 3052

[18] 5 C.C.R. § 3052(i)(3)

[19] 5 C.C.R. § 3052(i)(1)

[20] 20 U.S.C. § 1412(a)(5); 34 C.F.R. § 300.114; Cal. Ed. Code § 56031, 56342

[21] ຂໍ້ກຳນົດ AB3632 ກຳນົດໃຫ້ການສຶກສາເຂດ ປັບປຸງໜັງສືຂໍ້ຕົກລົງຕ່າງໆ ກັບອົງການຕ່າງໆ ທີ່ບໍ່ໄດ້ເຮັດວຽກດ້ານການສຶກສາທີ່ຢູ່ໃນທ້ອງຖິ່ນ, ເຊັ່ນ ພະແນກດູແລດ້ານສຸຂະພາບຈິດປະຈຳຄາວຕີ້ (County Departments of Mental Health, CMH) ໃຫ້ຈັດຫາການບໍລິການຕ່າງໆ ເຊັ່ນການໃຫ້ຄຳປຶກສາ, ການບຳບັດທາງຈິດ ຫລືການບຳບັດຄອບຄົວ. ຖ້າວ່າ ນັກຮຽນຖືກສົ່ງໄປທີ່ CMH ພາຍໃຕ້ AB3632 ແລະມີການຕັດສິນວ່າ ຈຳເປັນຕ້ອງເຮັດການປະເມີນຜົນ, ໃນກໍລະນີສ່ວນຫລາຍ, CMH ມີເວລາ 60 ວັນ ທີ່ຈະເຮັດການປະເມີນຜົນ ໃຫ້ສຳເລັດຫລັງຈາກໄດ້ຮັບໜັງສືຍິນຍອມຈາກພໍ່ແມ່ນັກຮຽນ. ການບໍລິການຕ່າງໆ ທີ່ສະໜອງໃຫ້ພາຍໃຕ້ AB3632, ກໍຄືກັນກັບການບໍລິການອື່ນໆ ທີ່ກ່ຽວຂ້ອງ, ຄວນຂຽນເປັນລາຍລັກອັກສອນໄວ້ໃນ IEP. ຂໍ້ມູນເພີ້ມເຕີມ ອື່ນໆກ່ຽວກັບການບໍລິການ AB3632 ສາມາດເບິ່ງໄດ້ໃນບົດທີ 9 ໃນຄູ່ມືຂອງ PAI ທີ່ຊື່ວ່າ, *ສິດທິດ້ານການສຶກສາພິເສດແລະຄວາມຮັບຜິດຊອບຕ່າງໆ*. Gov. Code §§ 7570, *et seq.*; 2 Cal. Code Regs. §§ 60000, *et seq.*